ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມຄຸ້ມຄອງຊັບສິນແຫ່ງລັດ

ເລກທີ 42401 /ຄຊລ

ນະຄອນຫຼວງວຽງຈັນ, ວັນທີ ໒໙ ພຶດສະພາ ໒໐໒໕

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນ ແຫ່ງລັດ ສະບັບເລກທີ 6199/ກງ, ລົງວັນທີ 16 ທັນວາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດຊື້ພາຫະນະຮັບໃຊ້ວິຊາສະເພາະຂອງເຈົ້າໜ້າທີ່ຊັບສິນແຫ່ງລັດ ສະບັບເລກກທີ 1582/ກງ, ລົງວັນທີ 27 ພຶດສະພາ 2025.

1. ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໄດ້ຮັບອະນຸມັດງົບປະມານຄັງລັດຖະການຊັບສິນຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອຈັດຊື້ພາຫະນະຈຳນວນ 7 ຄັນໃນການເຄື່ອນ ໄຫວວຽກງານຂອບເຂດທົ່ວປະເທດ (2 ຄັນແມ່ນກະບະລຸ້ນທ່ອນ ເກຍໂອໂຕ ແລະ 5 ຄັນ ແມ່ນລົດກະບະມີຫຼັງຄາ CARRY BOY ແລະ ຕິດຕັ້ງອຸປະກອນຄົບຊຸດ).
2. ຂໍເຊີນບັນດາບໍລິສັດ ທີ່ມີຄວາມເໝາະສົມໃຈເຂົ້າຮ່ວມຍື່ນຊອງປະມູນແບບເປີດກວ້າງ ສຳລັດການຈັດຊື້ພາຫະນະຈຳນວນ 7 ຄັນໃນການເຄື່ອນໄຫວວຽກງານຂອບເຂດທົ່ວປະທດ ກຳນົດໄລຍະມອບ-ຮັບແມ່ນ 20 ວັນ;
3. ການປະມູນດຳເນີນຕາມຂັ້ນຕອນການປະມູນແບບເປີດກ້ວາງ ລາຄາຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ບັນດາບໍລິສັດທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ຊື້ຊອງປະມູນໄດ້ ກົມຄຸ້ມຄອງຊັບສິນແຫ່ງລັດກະຊວງການເງິນ ທີ່ຕັ້ງຢູ່: ບ້ານໂພນໄຊ, ເມືອງ ໄຊເຊດຖາ ນະຄອນຫຼວງວຽງຈັນ, ເບີໂທ: 020 77885555, 02028999891 ເລີ່ມຂາຍຊອງແຕ່ວັນທີ 29 ພຶດສະພາ 2025 ເປັນຕົ້ນໄປ, ໃນລາຄາ 7,000,000 ກີບ/ຊອງ ຈຳນວນເງິນດັ່ງກ່າວ ນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນ 09:00ໂມງ, ຂອງວັນທີ 18 ມິຖຸນາ 2025 ທີ່ກົມຄຸ້ມຄອງຊັບສິນແຫ່ງລັດກະຊວງການເງິນ ແລະ ຊອງຈະໄດ້ເປີດໃນເວລາ09:00 ໂມງ, ຂອງວັນທີ 18 ມິຖຸນາ 2025 ໂດຍຊ່ອງໜ້າຄະນະຈັດຊື້.
6. ທຸກຊອງປະມູນຕ້ອງປະກອບເອກະສານຕາມເງື່ອນໄຂທີ່ໄດ້ກຳນົດໃນຊຸດເອກະສານປະມູນຢ່າງຄົບຖ້ວນ.

ຫົວໜ້າກົມຄຸ້ມຄອງຊັບສິນແຫ່ງລັດ
ຕາງໜ້າຄະນະຮັບຜິດຊອບຈັດຊື້

ພຸດທະສິນ ເຮືອງທະວົງ
Mr.Phouthasinh HEANGTHAVONG